**ມິຊຊາອາທິດທີ 14 ກຳນົດທຳມະດາ**

**ວັນທີ 3 ກໍລະກົດ 2022**



**ພຣະວໍລະສານໂດຍນັກບຸນລູກາ 10, 1-9**

ໃນເວລານັ້ນ, ພຣະເຢຊູເຈົ້າໄດ້ເລືອກລູກສິດອື່ນອີກເຈັດສິບສອງຄົນແລ້ວສົ່ງພວກເຂົາເປັນຈຸລະສອງຄົນລ່ວງໜ້າພຣະອົງໄປຕາມບ້ານເມືອງຕ່າງໆບ່ອນພຣະອົງຈະສະເດັດໄປ. ພຣະອົງບອກພວກເຂົາວ່າ: ເຂົ້າສຸກເຕັມນາ ແຕ່ຄົນກ່ຽວມີໜ້ອຍ. ຈົ່ງຂໍໃຫ້ເຈົ້າຂອງນາສົ່ງຄົນງານມາກ່ຽວຫລາຍໆເຖີດ. ພວກເຈົ້າຈົ່ງໄປ. ເຮົາສົ່ງພວກເຈົ້າໄປຄືສົ່ງລູກແກະໄປຫາໝູ່ໝາໄນ. ພວກເຈົ້າຢ່າຖືເງິນຖືຍ່າມຫລືເກີບຕິດຕົວໄປເລີຍ. ຢ່າຢຸດຢາມຖາມຂ່າວຜູ້ໃດຕາມທາງ.

ເມື່ອເຂົ້າເຮືອນໃດ, ຂໍໃຫ້ເວົ້າວ່າ: ສັນຕິສຸກຈົ່ງມີແກ່ເຮືອນນີ້ເຖີດ. ຖ້າວ່າຢູ່ເຮືອນນັ້ນມີຜູ້ມັກຊອບສັນຕິສຸກ, ສັນຕິສຸກຂອງພວກເຈົ້າກໍຈະຢູ່ນຳເຂົາ; ຖ້າວ່າບໍ່ມີ, ສັນຕິສຸກນັ້ນກໍຈະຄືນມາຫາພວກເຈົ້າ. ຈົ່ງພັກເຊົາຢູ່ເຮືອນນັ້ນ, ກິນແລະດື່ມຕາມທີ່ຈະມີ ຍ້ອນວ່າຄົນມີສິດໄດ້ຄ່າຈ້າງ. ຢ່າຂຶ້ນເຮືອນນີ້ລົງເຮືອນນັ້ນ.

ເມື່ອເຂົ້າໄປໃນເມືອງໃດ, ຖ້າມີຄົນຕ້ອນຮັບກໍຈົ່ງຮັບກິນຕາມທີ່ເຂົາທານ. ຈົ່ງປິ່ນປົວຄົນເຈັບໄຂ້ໄດ້ພະຍາດ ແລະບອກກັບຊາວເມືອງວ່າ: ພຣະລາໄຊຂອງພຣະເຈົ້າມາຮອດໃກ້ພວກທ່ານແລ້ວ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ການທີ່ພຣະເຢຊູເຈົ້າເລືອກເອົາລູກສິດຕື່ມອີກ 72 ຄົນ, ແລ້ວສົ່ງພວກເຂົາໄປປະກາດພຣະລາໄຊຂອງພຣະເຈົ້ານັ້ນສະແດງໃຫ້ພວກເຮົາເຫັນກ່ອນອື່ນໝົດ ພຣະເຢຊູເຈົ້າຕ້ອງການຄວາມຮ່ວມມືຂອງພວກເຮົາໃນການປະກາດຂ່າວດີແຫ່ງພຣະລາໄຊຂອງພຣະເຈົ້າ. ຈາກນັ້ນ, ການທີ່ພຣະເຢຊູເຈົ້າເລືອກລູກສິດຕື່ມອີກຍັງສະແດງໃຫ້ພວກເຮົາຮູ້ວ່າ ຜູ້ທີ່ຍັງບໍ່ທັນຮູ້ຈັກພຣະເຈົ້ານັ້ນຍັງມີຫລາຍ. ແລະທ້າຍສຸດ, ການທີ່ພຣະເຢຊູເຈົ້າເລືອກເອົາລູກສິດຕື່ມອີກຍັງສະແດງອອກເຖິງຄວາມຮັກອັນຍິ່ງໃຫຍ່ຂອງພຣະອົງທີ່ມີຕໍ່ພວກເຮົາ. ເພາະພຣະອົງປາດຖະໜາໃຫ້ພວກເຮົາທຸກຄົນໄດ້ຮູ້ຈັກພຣະລາໄຊຂອງເຈົ້າແລະໄດ້ຮັບຄວາມຣອດ.

ໃນບົດອ່ານທີໜຶ່ງຂອງວັນນີ້, ປະພາສົກອີຊາຢາໄດ້ໃຊ້ຮູບພາບຂອງຜູ້ເປັນແມ່ທີ່ລ້ຽງດູແລະອື່ນອອຍລູກຂອງຕົນ ເພື່ອປາກເວົ້າສະແດງອອກເຖິງຄວາມຮັກຂອງພຣະເຈົ້າທີ່ມີຕໍ່ພວກເຮົາ. ສ່ວນພວກເຮົາກໍມີຄວາມຍິນດີເມື່ອຢູ່ໃກ້ຊິດຜູ້ເປັນແມ່ທີ່ຮັກຫອມພວກເຮົາ. ດັ່ງທີ່ພວກເຮົາມີຄວາມຍິນດີເມື່ອໄດ້ຢູ່ໃກ້ຊິດກັບພຣະເຈົ້າ.

ສ່ວນໃນບົດອ່ານທີສອງຂອງວັນນີ້, ນັກບຸນເປົາໂລໄດ້ໃຊ້ຮູບພາບຂອງຄວາມຕາຍຂອງພຣະເຢຊູເຈົ້າບົນໄມ້ກາງເຂນເພື່ອອະທິບາຍໃຫ້ກຸ່ມກຣິສຕະຊົນຢູ່ເມືອງກາລາຊີອາໃຫ້ຮູ້ເຖິງຄວາມຮັກຂອງພຣະເຈົ້າທີ່ມີຕໍ່ພວກເຂົາຜ່ານທາງພຣະເຢຊູເຈົ້າ ພຣະບຸດຂອງພຣະອົງ. ເພາະບໍ່ມີຄວາມຮັກໃດຍິ່ງໃຫຍ່ເທົ່າການຍອມສະລະຊີວິດຂອງຕົນເພື່ອຄົນທີ່ເຮົາຮັກ.

ຄວາມຮັກຂອງພຣະເຈົ້າທີ່ມີຕໍ່ພວກເຮົານີ້ແລແມ່ນເຄື່ອງໝາຍແຫ່ງພຣະລາໄຊຂອງພຣະເຈົ້າຢູ່ທ່າມກາງພວກເຮົາ. ດ້ວຍເຫດນີ້, ໃນພຣະວໍລະສານວັນນີ້, ພຣະເຢຊູເຈົ້າຈຶ່ງສັ່ງບອກພວກລູກສິດຂອງພຣະອົງ ເມື່ອເຂົ້າໃນເຮືອນຫລັງໃດກ່ອນອື່ນໝົດໃຫ້ມອບສັນຕິສຸກຂອງພຣະເຈົ້າໃຫ້ເຮືອນຫລັງນັ້ນ. ໝາຍວ່າໃຫ້ມອບຄວາມຮັກຂອງພຣະເຈົ້າໃຫ້ເຮືອນຫລັງນັ້ນ. ເພາະຄວາມຮັກຂອງພຣະເຈົ້າເປັນເຄື່ອງໝາຍແຫ່ງພຣະລາໄຊຂອງພຣະອົງທີ່ມາຣອດພວກເຂົາ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດທຳໃຫ້ລູກກາຍເປັນລູກສິດແຫ່ງພຣະລາໄຊຂອງພຣະອົງໃນຄອບຄົວຂອງລູກ, ໃນບ່ອນທີ່ລູກສຶກສາຮ່ຳຮຽນ, ໃນສະຖານທີ່ຊຶ່ງລູກທຳງານ. ເພື່ອໃຫ້ຜູ້ຄົນທີ່ຢູ່ອ້ອມຂ້າງລູກສຳພັດໄດ້ເຖິງຄວາມຮັກຂອງພຣະເຈົ້າຜ່ານທາງຊີວິດການເປັນພິຍານຂອງລູກດ້ວຍເທີ້ນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ